ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
-----===000===-----

**ທະນາຄານແຫ່ງ ສປປ ລາວ** ເລກທີ 02/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 20/ມິຖຸນາ/2008

# ຂໍ້ກຳນົດ
## ວ່າດ້ວຍການຄຸ້ມຄອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

- ອີງຕາມກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999.
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງການເງິນຈຸລະພາກ ເລກທີ 05/ນຍ, ລົງວັນທີ 04 ເມສາ 2007.
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ກຳນົດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ກຳນົດສະບັບນີ້ ແມ່ນເພື່ອຄຸ້ມຄອງການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບັນດາສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໃນ ສປປ ລາວ ໂດຍການວາງມາດຕະການເພື່ອແນໃສ່ຮັບປະກັນຄວາມຍືນຍົງ ແລະ ສອດຄ່ອງໃນການຈັດຕັ້ງປະຕິບັດ.

**ມາດຕາ 2. ຄວາມໝາຍຄຳສັບທີ່ນຳໃຊ້ໃນຂໍ້ກຳນົດສະບັບນີ້**

- **"ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ"** ໝາຍເຖິງສະຖາບັນ ທີ່ໄດ້ຮັບໃບຢັ້ງຢືນການຂຶ້ນທະບຽນຈາກທະນາຄານແຫ່ງ ສປປ ລາວ, ບໍ່ສາມາດລະດົມເງິນຝາກສະໝັກໃຈ ຈາກມວນຊົນທົ່ວໄປຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງຂໍ້ກຳນົດສະບັບນີ້.

- **"ໃບຢັ້ງຢືນການຂຶ້ນທະບຽນ"** ໝາຍເຖິງໃບອະນຸຍາດທີ່ທະນາຄານແຫ່ງ ສປປ ລາວ ໄດ້ອອກໃຫ້ແກ່ສະຖາບັນການເງິນຈຸລະພາກ ເພື່ອເຄື່ອນໄຫວດຳເນີນງານຕາມຂໍ້ກຳນົດສະບັບນີ້.
- **"ບັນດາກິດຈະກຳການເງິນຈຸລະພາກ"** ໝາຍເຖິງການປ່ອຍເງິນກູ້ຈຸລະພາກ, ການຮັບເງິນຝາກແບບພັນທະ ແລະ ການບໍລິການການເງິນອື່ນໆ ຕາມທີ່ໄດ້ກຳນົດໄວ້ຢູ່ໃນຂໍ້ກຳນົດສະບັບນີ້ ຫລື ຕາມການປ່ຽນແປງຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.
- **"ເງິນຝາກແບບສະໝັກໃຈ"** ໝາຍເຖິງເງິນຝາກ ທີ່ສາມາດຝາກ ຫລື ຖອນໄດ້ທຸກເວລາ ຫລື ຕາມການຕົກລົງໄວ້ກັບສະຖາບັນການເງິນຈຸລະພາກທີ່ຂຶ້ນທະບຽນ.
- **"ເງິນຝາກແບບພັນທະ"** ໝາຍເຖິງເງິນຝາກຄ້ຳປະກັນເງິນກູ້ ທີ່ຜູ້ກູ້ຢືມເງິນນຳ ຕ້ອງໄດ້ນຳມາຝາກໄວ້ກັບສະຖາບັນການເງິນຈຸລະພາກທີ່ປ່ອຍກູ້ ຕາມອັດຕາສ່ວນ ຫລື ວົງເງິນທີ່ສະຖາບັນການເງິນຈຸລະພາກດັ່ງກ່າວວາງອອກ. ຜູ້ກູ້ຢືມສາມາດຖອນເງິນຝາກດັ່ງກ່າວໄດ້ທັນທີຫາກຊຳລະໜີ້ສິນຄືນຢ່າງຄົບຖ້ວນແລ້ວ.
- **"ເງິນກູ້ຈຸລະພາກ"** ໝາຍເຖິງເງິນກູ້ທີ່ມີ ຫລື ບໍ່ມີຫຼັກຊັບຄ້ຳປະກັນ ທີ່ມີວົງເງິນປ່ອຍກູ້ບໍ່ເກີນສິບລ້ານ (10.000.000) ກີບ ຫລື ຕາມທີ່ທາງທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ.
- **"ເງິນກູ້ບໍ່ເກີດດອກອອກຜົນ" ໝາຍເຖິງເງິນກູ້ທີ່ມີ :**
  1. ຕົ້ນທຶນ ແລະ/ຫລື ດອກເບ້ຍຈະເປັນທັງໝົດ ຫລື ສ່ວນໃດສ່ວນໜຶ່ງ ທີ່ບໍ່ສາມາດຊຳລະໄດ້ຕາມແຜນການທີ່ໄດ້ກຳນົດໄວ້ ຊຶ່ງຄ້າງຊຳລະແຕ່ສາມສິບ (30) ວັນຂຶ້ນໄປ;
  2. ຕົ້ນທຶນ ທີ່ຄ້າງຮັບນັບແຕ່ສາມສິບ (30) ວັນຂຶ້ນໄປ ຫລື ດອກເບັ້ຍທີ່ຄ້າງຮັບນັບແຕ່ ສາມສິບ (30) ວັນຂຶ້ນໄປ ຫາກນຳໄປບວກກັບຕົ້ນທຶນເງິນກູ້ບ້ວງເດີມ ທີ່ມີຢູ່ແລ້ວ, ບວກກັບເງິນກູ້ບ້ວງປ່ອຍໃໝ່ ຫລື ເງິນກູ້ທີ່ມີການປັບປຸງໂຄງສ້າງໜີ້.

## ໝວດທີ II
## ການສ້າງຕັ້ງ ແລະ ຍຸບເລີກ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

### ມາດຕາ 3. ເງື່ອນໄຂການຂໍສະເໜີ ໃບຢັ້ງຢືນການຂຶ້ນທະບຽນ

ບັນດາອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ລວມໝູ່ ຫລື ວິສາຫະກິດ ທີ່ໄດ້ດຳເນີນ ຫລື ກຳລັງຈະດຳເນີນການເຄື່ອນໄຫວຄື ຫລື ຄ້າຍຄືກິດຈະກຳການເງິນຈຸລະພາກ ໂດຍບໍ່ຈຳກັດແຕ່:

1. ທະນາຄານບ້ານ
2. ກຸ່ມທ້ອນເງິນ
3. ກອງທຶນຂັ້ນບ້ານ
4. ກອງທຶນເພື່ອການພັດທະນາ
5. ອື່ນໆ.

ອີງການທີ່ກ່າວມາຂ້າງເທິງນີ້ ແມ່ນຮຽກຮ້ອງໃຫ້ຂຶ້ນທະບຽນພາຍໃຕ້ຂໍ້ກຳນົດສະບັບນີ້ ແລະ ຕ້ອງຍື່ນສະເໜີຄຳຮ້ອງເຖິງ ທະນາຄານແຫ່ງ ສປປ ລາວ ເພື່ອສະເໜີຂໍໃບຢັ້ງຢືນການຂຶ້ນທະບຽນ.

## ມາດຕາ 4. ເອກະສານປະກອບໃນການສະເໜີຂໍໃບຢັ້ງຢືນການຂຶ້ນທະບຽນ

ເອກະສານຂໍໃບຢັ້ງຢືນການຂຶ້ນທະບຽນ ຕ້ອງປະກອບດ້ວຍ ເອກະສານທີ່ເປັນຕົ້ນສະບັບ ດັ່ງຕໍ່ໄປນີ້:

1. ຄຳຮ້ອງຕາມແບບຟອມທີ່ ທາງທະນາຄານ ແຫ່ງ ສປປ ລາວ ວາງອອກ;
2. ກົດລະບຽບພາຍໃນ ທີ່ສອດຄ່ອງກັບ ກົດໝາຍ ແລະ ຂໍ້ກຳນົດສະບັບນີ້ວາງອອກ;
3. ໃບຄຳໝັ້ນສັນຍາ;
4. ໃບສະຫຼຸບຊັບສິນບັດ (ສະຫຼຸບຖານະຊັບສິນ, ໜີ້ສິນ ແລະ ທຶນ);
5. ໃບຢັ້ງຢືນທີ່ຕັ້ງສຳນັກງານຈາກອຳນາດການປົກຄອງບ້ານ/ແຜນວາດທີ່ຕັ້ງສຳນັກງານ.

## ມາດຕາ 5. ການພິຈາລະນາການອອກໃບຢັ້ງຢືນການຂຶ້ນທະບຽນ

1. ທະນາຄານແຫ່ງ ສປປ ລາວ ຈະແຈ້ງຕອບຜົນຂອງການຄົ້ນຄວ້າສຳນວນເອກະສານໃນການສະເໜີຂໍໃບຢັ້ງຢືນການຂຶ້ນທະບຽນ (ປະຕິເສດ ຫລື ຕອບຮັບ) ພາຍໃນກຳນົດເວລາສາມສິບ (30) ວັນລັດຖະການ ນັບແຕ່ມື້ທີ່ໄດ້ຮັບສຳນວນເອກະສານຄົບຖ້ວນ.
2. ພາຍຫຼັງທີ່ໄດ້ຮັບໃບຢັ້ງຢືນການຂຶ້ນທະບຽນຈາກ ທະນາຄານແຫ່ງ ສປປ ລາວ ແລ້ວ, ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງໄດ້ໄປຂໍຂຶ້ນທະບຽນນຳຂະແໜງການທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບກົດໝາຍທີ່ວາງອອກແຕ່ລະໄລຍະ ພາຍໃນກຳນົດເວລາ ສິບຫ້າ (15) ວັນລັດຖະການ.

## ມາດຕາ 6. ຊື່ຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

1. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງໃສ່ຊື່ຕາມທີ່ໄດ້ລະບຸໄວ້ຢູ່ໃນໃບຢັ້ງຢືນການຂຶ້ນທະບຽນ. ຖ້າໃສ່ຊື່ເປັນພາສາສາກົນ ກໍຕ້ອງໃຫ້ມີຄວາມໝາຍຄືກັບຊື່ທີ່ໄດ້ລະບຸຢູ່ໃນ ໃບຢັ້ງຢືນການຂຶ້ນທະບຽນ.

2. ທະນາຄານແຫ່ງ ສປປ ລາວ ບໍ່ອະນຸຍາດໃຫ້ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນ ໃຊ້ຊື່ທີ່ຖືກນຳໃຊ້ແລ້ວ ຫລື ຊື່ໃກ້ຄຽງກັບຊື່ທີ່ຖືກນຳໃຊ້ໃນປະຈຸບັນຂອງສະຖາບັນການເງິນຈຸລະພາກ ທີ່ບໍ່ຮັບເງິນຝາກນອື່ນໆ.

## ມາດຕາ 7. ອາຍຸຂອງໃບຢັ້ງຢືນການຂຶ້ນທະບຽນ

ໃບຢັ້ງຢືນການຂຶ້ນທະບຽນຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ມີອາຍຸການນຳໃຊ້ສິບ (10) ປີ ເວັ້ນເສຍແຕ່ຈະມີການຖອນໃບຢັ້ງຢືນການຂຶ້ນທະບຽນຄືນກ່ອນກຳນົດ ໂດຍທະນາຄານແຫ່ງ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 11 ຂອງຂໍ້ກຳນົດສະບັບນີ້.

## ມາດຕາ 8. ການປະຕິເສດ ການສະເໜີຂໍຂຶ້ນທະບຽນ

1. ໃບຢັ້ງຢືນການຂຶ້ນທະບຽນຈະບໍ່ຖືກອອກໃຫ້ແກ່ຜູ້ສະເໜີຂໍສ້າງຕັ້ງ ຖ້າທະນາຄານແຫ່ງ ສປປ ລາວ ພົບວ່າ:

(1). ຜູ້ສະເໜີຂໍໃບຢັ້ງຢືນການຂຶ້ນທະບຽນ ກໍາລັງມີສ່ວນຮ່ວມໃນການເຄື່ອນໄຫວ ທີ່ບໍ່ຖືກຕ້ອງຕາມກົດໝາຍ ຫລື ມີຄໍາສັ່ງຕັດສິນຂອງສານ ຫ້າມບໍ່ໃຫ້ເຄື່ອນໄຫວທຸລະກິດການເງິນຈຸລະພາກ ຫລື ການທະນາຄານ;

(2). ປະຕິບັດບໍ່ໄດ້ຄົບຖ້ວນຕາມເງື່ອນໄຂ ທີ່ວາງໄວ້ໃນ ມາດຕາ 4 ຂອງຂໍ້ກໍານົດສະບັບນີ້;

(3). ເອກະສານຕ່າງໆທີ່ຜູ້ສະເໜີຂໍໃບຢັ້ງຢືນການຂຶ້ນທະບຽນ ທີ່ໄດ້ປະກອບມານັ້ນ ບໍ່ສາມາດເຊື່ອຖືໄດ້.

2. ໃນກໍລະນີທີ່ຖືກປະຕິເສດການອອກໃບຢັ້ງຢືນການຂຶ້ນທະບຽນ, ທະນາຄານແຫ່ງ ສປປ ລາວ ຕ້ອງແຈ້ງເປັນລາຍລັກອັກສອນກ່ຽວກັບ ເຫດຜົນຂອງການປະຕິເສດ ແລະ ນໍາສົ່ງເອກະສານທັງໝົດຄືນໃຫ້ແກ່ຜູ້ຍື່ນຄໍາຮ້ອງ ພາຍໃນສາມສິບ (30) ວັນລັດຖະການ.

## ມາດຕາ 9. ການສະເໜີຂໍໃບຢັ້ງຢືນການຂຶ້ນທະບຽນຄືນໃໝ່

ຜູ້ສະເໜີທີ່ຖືກປະຕິເສດ ສາມາດປະກອບຄໍາຊີ້ແຈງຢ່າງເປັນລາຍລັກອັກສອນໃຫ້ແກ່ ທະນາຄານແຫ່ງ ສປປ ລາວ, ຖ້າຫາກພິຈາລະນາເຫັນວ່າການຊີ້ແຈງດັ່ງກ່າວ ສົມເຫດສົມຜົນແລ້ວ, ທະນາຄານແຫ່ງ ສປປ ລາວ ຈະອະນຸຍາດໃຫ້ຜູ້ສະເໜີຂໍປະກອບເອກະສານຂໍຂຶ້ນທະບຽນຄືນໃໝ່ອີກ. ທະນາຄານແຫ່ງ ສປປ ລາວ ຈະແຈ້ງຕອບຢ່າງເປັນລາຍລັກອັກສອນ ກ່ຽວກັບຜົນຂອງການຄົ້ນຄວ້າດັ່ງກ່າວພາຍໃນສາມສິບ (30) ວັນລັດຖະການ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 5 ຂອງຂໍ້ກໍານົດສະບັບນີ້.

## ມາດຕາ 10. ຄ່າບໍລິການຂໍໃບຢັ້ງຢືນການຂຶ້ນທະບຽນ

1. ຜູ້ສະເໜີຂໍໃບຢັ້ງຢືນການຂຶ້ນທະບຽນ ຕ້ອງເສຍຄ່າບໍລິການ ສອງແສນ (200.000) ກີບ;
2. ສໍາລັບການສະເໜີຄືນໃໝ່ ຄັ້ງທໍາອິດຈະບໍ່ເສຍຄ່າບໍລິການ, ສ່ວນຄັ້ງທີສອງຕ້ອງເສຍຫ້າແສນ (500.000) ກີບ, ສ່ວນຄັ້ງຕໍ່ໆໄປຈະຕ້ອງເສຍໃນມູນຄ່າ 150% ຂອງຄັ້ງສຸດທ້າຍ.

## ມາດຕາ 11. ການໂຈະໃບຢັ້ງຢືນການຂຶ້ນທະບຽນ ແລະ ການເຄື່ອນໄຫວກິດຈະການ

1. ໃນກໍລະນີ ທີ່ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ບໍ່ໄປຂຶ້ນທະບຽນນໍາຂະແໜງການທີ່ ກ່ຽວຂ້ອງພາຍໃນກໍານົດເວລາທີ່ກໍານົດໄວ້ໃນ ມາດຕາ 5, ໃບຢັ້ງຢືນການຂຶ້ນທະບຽນຈະຖືກສັ່ງໂຈະ.

2. ໃນກໍລະນີທີ່ ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ໄດ້ຮັບການແຈ້ງເຕືອນຈາກທະນາຄານແຫ່ງ ສປປ ລາວ ແຕ່ບໍ່ໄດ້ປະຕິບັດຕາມການແຈ້ງເຕືອນດັ່ງກ່າວ ສະຖາບັນການເງິນຈຸລະ

ພາກທີ່ບໍ່ຮັບເງິນຝາກ ຈະຖືກ ທະນາຄານແຫ່ງ ສປປ ລາວ ສັ່ງໂຈະໃບຢັ້ງຢືນການຂຶ້ນທະບຽນ ຊຶ່ງອາດມີກຳນົດເຖິງ ຫົກ (6) ເດືອນ.

**ມາດຕາ 12. ການຖອນໃບຢັ້ງຢືນການຂຶ້ນທະບຽນ**

ທະນາຄານແຫ່ງ ສປປ ລາວ ຈະຖອນໃບຢັ້ງຢືນການຂຶ້ນທະບຽນຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຄືນທັນທີ ຖ້າຫາກວ່າ :

1. ຖືກສັ່ງໂຈະເກີນ ຫົກ (6) ເດືອນຂຶ້ນໄປ;
2. ບໍ່ມີການເຄື່ອນໄຫວວຽກງານພາຍໃນກຳນົດສິບສອງ (12) ເດືອນນັບແຕ່ມື້ທີ່ໄດ້ຮັບໃບຢັ້ງຢືນການຂຶ້ນທະບຽນ ເປັນຕົ້ນໄປ;
3. ຖືກສານຕັດສິນຫ້າມບໍ່ໃຫ້ເຄື່ອນໄຫວກິດຈະການກ່ຽວກັບການເງິນຈຸລະພາກ ຫລື ດ້ານການທະນາຄານ;
4. ບໍ່ສາມາດສືບຕໍ່ດຳເນີນກິດຈະການຕໍ່ໄປ.

## ໝວດທີ III
## ທຶນຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

**ມາດຕາ 13. ທຶນ**

1. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສາມາດສ້າງຕັ້ງ ແລະ ເຄື່ອນໄຫວໂດຍບໍ່ໄດ້ຈຳ ກັດລະດັບທຶນຈົດທະບຽນ.

2. ທຶນຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ອາດລະດົມມາຈາກການຊ່ວຍເຫຼືອລ້າ ຫລື ບໍລິຈາກ ຈາກອົງການຈັດຕັ້ງລັດຖະບານ, ອົງການຈັດຕັ້ງສາກົນ, ພາກສ່ວນເອກະຊົນ ແລະ ພາກສ່ວນອື່ນໆ.

## ໝວດທີ IV
## ການດຳເນີນການເຄື່ອນໄຫວຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ

**ມາດຕາ 14. ສິດ ແລະ ຄວາມຮັບຜິດຊອບຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ**

1. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກມີສິດ ແລະ ຄວາມຮັບຜິດຊອບ ດັ່ງນີ້:

(1). ປ່ອຍເງິນກູ້ຈຸລະພາກເປັນເງິນກີບໃຫ້ແກ່ສະມາຊິກ;

(2). ຮັບເງິນຝາກແບບພັນທະ ຈາກສະມາຊິກເປັນເງິນກີບ;

(3). ລະດົມທຶນ ໃນຮູບແບບເງິນກູ້ຢືມ ຫລື ເງິນຊ່ວຍເຫຼືອລ້າທັງຈາກອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຫລື ນິຕິບຸກຄົນອື່ນໆ;

(4). ສຳລັບການກູ້ຢືມເງິນ/ທຶນ ຈາກອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຫລື ພາກສ່ວນອື່ນໆ ຕ້ອງໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ;

(5). ລະດົມໃຫ້ມະຫາຊົນທົ່ວໄປ ເຂົ້າເປັນສະມາຊິກ ສະຖາບັນຂອງຕົນ;

(6). ເປີດບັນຊີ ແລະ ຝາກເງິນໄວ້ນຳທະນາຄານແຫ່ງ ສປປ ລາວ ຫລື ທະນາຄານທຸລະກິດພາຍໃນປະເທດ;

(7). ແຈ້ງໃຫ້ລູກຄ້າຊາບກ່ອນຈະມີການເຊັນສັນຍາເງິນກູ້ ກ່ຽວກັບຄ່າບໍລິການ ແລະ ອັດຕາດອກເບັ້ຍທີ່ຕ້ອງໄດ້ຊຳລະຄືນເງິນກູ້ດັ່ງກ່າວ ເປັນເງິນກີບຕະຫຼອດໄລຍະຂອງການກູ້ຢືມ.

2. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສາມາດກຳນົດອັດຕາດອກເບັ້ຍເງິນຝາກ ແລະ ເງິນກູ້ ຕາມກົນໄກຕະຫຼາດ ໂດຍພາຍໃຕ້ການຄຸ້ມຄອງຂອງ ທະນາຄານແຫ່ງ ສປປ ລາວ.

3. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ສາມາດຮັບເງິນຝາກແບບສະໝັກໃຈໄດ້ແຕ່ລວມແລ້ວບໍ່ໃຫ້ເກີນສອງຮ້ອຍ (200) ລ້ານກີບ ຫລື ຍອດລວມເງິນຝາກຂອງສະມາຊິກສູງສຸດຕ້ອງບໍ່ເກີນສິບ (10) ລ້ານກີບຕໍ່ຄົນ ເວັ້ນເສຍແຕ່ຈະໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ;

4. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີ່ໄດ້ຮັບການບໍລິຈາກ ຫລື ສະໜັບສະໜູນເປັນເງິນຊ່ວຍເຫຼືອລ້າຈາກພາຍໃນ ແລະ ຕ່າງປະເທດຈະຕ້ອງສະແດງໃຫ້ເຫັນໄດ້ແຫຼ່ງທີ່ມາຂອງເງິນທຶນດັ່ງກ່າວ ເພື່ອຫຼີກລ້ຽງການຟອກເງິນ.

**ມາດຕາ 15. ສັນຍາເງິນກູ້**

1. ເນື້ອໃນສັນຍາເງິນກູ້ ຢ່າງໜ້ອຍຕ້ອງໄດ້ກຳນົດເນື້ອໃນດັ່ງນີ້:

(1). ຊື່ເຕັມຂອງຜູ້ກູ້ຢືມ;

(2). ຈຳນວນເງິນໃຫ້ກູ້ຢືມ;

(3). ເປົ້າໝາຍ ແລະ ກຳນົດເວລາໃນການນຳໃຊ້ເງິນກູ້;

(4). ກຳນົດເວລາຊຳລະ ແລະ ຕາຕະລາງ ການຊຳລະເງິນກູ້ຄືນ;

(5). ອັດຕາດອກເບັ້ຍເງິນກູ້ທີ່ຕ້ອງໄດ້ຊຳລະຕະຫຼອດໄລຍະເວລາຂອງເງິນກູ້;

(6). ມູນຄ່າຂອງຄ່າບໍລິການທັງໝົດທີ່ຕ້ອງຈ່າຍຕະຫຼອດໄລຍະເວລາຂອງເງິນກູ້, ຖ້າມີ;

(7). ມູນຄ່າດອກເບັ້ຍທັງໝົດທີ່ຕ້ອງຊຳລະຕະຫຼອດໄລຍະເວລາຂອງເງິນກູ້;

(8). ການປັບໄໝ (ກໍລະນີຜູ້ກູ້ຢືມບໍ່ສາມາດປະຕິບັດການຊຳລະໜີ້ໄດ້ຕາມສັນຍາເງິນກູ້);

(9). ຫຼັກຊັບຄ້ຳປະກັນ ຫລື ການຄ້ຳປະກັນ, ຖ້າມີ;

(10). ວິທີແກ້ໄຂຂໍ້ຂັດແຍ່ງ.

2. ສັນຍາເງິນກູ້ຕ້ອງມີລາຍເຊັນຢັ້ງຢືນລະຫວ່າງສະຖາບັນ (ຜູ້ໃຫ້ກູ້ຢືມ ແລະ ຜູ້ກູ້ຢືມ) ຈິ່ງມີຜົນບັງຄັບໃຊ້ໄດ້.

**ມາດຕາ 16. ການຈັດປະເພດເງິນກູ້ ແລະ ການສ້າງຄັງແຮເພື່ອໜີ້ທວງຍາກ**

1. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງມີການຕິດຕາມເງິນກູ້ທີ່ປ່ອຍອອກໄປຢ່າງເປັນປົກກະຕິ ຢ່າງໜ້ອຍທຸກໆໄຕມາດ ຊຶ່ງຖ້າຫາກເກີດມີເງິນກູ້ຄ້າງຊຳລະ ທີ່ເກີນກຳນົດໄລຍະເວລາຕາມ ທີ່ໄດ້ລະບຸໄວ້ຂ້າງລຸ່ມຕໍ່ໄປນີ້ ເງິນກູ້ດັ່ງກ່າວຕ້ອງໄດ້ຖືກຈັດເຂົ້າຢູ່ໃນປະເພດເງິນກູ້ທີ່ບໍ່ເກີດດອກອອກຜົນ ແລະ ສ້າງຄັງແຮເພື່ອໜີ້ທວງຍາກ:

(1). ເງິນກູ້ທີ່ຄ້າງຊຳລະ (ທັງຕົ້ນທຶນ ແລະ/ຫລື ດອກເບ້ຍ) ແຕ່ 31-90 ວັນ ຕ້ອງໄດ້ຖືກຈັດເຂົ້າຢູ່ໃນປະເພດໜີ້ຕ່ຳກວ່າມາດຕະຖານ ແລະ ຕ້ອງໄດ້ສ້າງຄັງແຮຊາວຫ້າສ່ວນຮ້ອຍ (25%) ຂອງຍອດເຫຼືອເງິນກູ້ດັ່ງກ່າວ.
(2). ເງິນກູ້ທີ່ຄ້າງຊຳລະ (ທັງຕົ້ນທຶນ ແລະ/ຫລື ດອກເບ້ຍ) ແຕ່ 91-180 ວັນ ຕ້ອງໄດ້ຖືກຈັດເຂົ້າຢູ່ໃນປະເພດໜີ້ສົງໃສ ແລະ ຕ້ອງໄດ້ສ້າງຄັງແຮຫ້າສິບສ່ວນຮ້ອຍ (50%) ຂອງຍອດເຫຼືອເງິນກູ້ດັ່ງກ່າວ.
(3). ເງິນກູ້ທີ່ຄ້າງຊຳລະ (ທັງຕົ້ນທຶນ ແລະ/ຫລື ດອກເບ້ຍ) ທີ່ເກີນ 180 ວັນ ຕ້ອງໄດ້ຖືກຈັດເຂົ້າຢູ່ໃນປະເພດໜີ້ສູນ ແລະ ຕ້ອງໄດ້ສ້າງຄັງແຮຮ້ອຍສ່ວນຮ້ອຍ (100%) ຂອງຍອດເຫຼືອເງິນກູ້ດັ່ງກ່າວ.

2. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງເກັບມ້ຽນທຸກເອກະສານທີ່ກ່ຽວພັນກັບເງິນກູ້ທີ່ບໍ່ເກີດດອກອອກຜົນ ເພື່ອໃຊ້ເປັນບ່ອນອີງໃນການກວດກາຄວາມຖືກຕ້ອງ ແລະ ຄວາມສົມບູນຂອງການສ້າງຄັງແຮ ແລະ ໃຊ້ເປັນຫລັກຖານໃນເວລາເກັບກູ້ໜີ້ ຫລື ເວລາມີການດຳເນີນທາງດ້ານກົດໝາຍຕໍ່ຜູ້ກູ້ຢືມດັ່ງກ່າວ.

**ມາດຕາ 17. ລາຍຮັບ ແລະ ລາຍຈ່າຍ**

1. ລາຍຮັບຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ມີດັ່ງນີ້:
(1). ລາຍຮັບຈາກດອກເບ້ຍ;
(2). ລາຍຮັບຈາກການບໍລິການ;
(3). ລາຍຮັບອື່ນໆ

2. ລາຍຈ່າຍຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ມີດັ່ງນີ້:
(1). ລາຍຈ່າຍດອກເບ້ຍ ເງິນກູ້ຢືມມາ;

(2). ລາຍຈ່າຍໃນການບໍລິຫານທຸລະກິດ;

(3). ລາຍຈ່າຍການສ້າງຄັງແຮເພື່ອໜີ້ທວງຍາກ;

(4). ລາຍຈ່າຍຄ່າເຊື່ອມມູນຄ່າຊັບສິນ ແລະ ຫັກຄ່າຫຼຸ້ຍຫ້ຽນຊັບສິນບັດຄົງທີ່;

(5). ລາຍຈ່າຍອື່ນໆ

**ມາດຕາ 18. ດ້ານການບັນຊີ ແລະ ການລາຍງານ**

1. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີ່ໄດ້ຮັບໃບຢັ້ງຢືນການຂຶ້ນທະບຽນຕ້ອງໃຊ້ສາລະບານບັນຊີ ທີ່ທະນາຄານແຫ່ງ ສປປ ລາວ ກໍານົດ ແລະ ປະກາດໃຊ້.

2. ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງສະຫຼຸບ ແລະ ນໍາສົ່ງບົດລາຍງານປະຈໍາປີ ດັ່ງລຸ່ມນີ້ໃຫ້ ທະນາຄານແຫ່ງ ສປປ ລາວ ຢ່າງຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນມັງກອນຂອງປີຖັດມາ ຊຶ່ງລວມມີ:

(1). ຂໍ້ມູນກ່ຽວກັບຊັບສິນ-ໜີ້ສິນ (ໃບສະຫຼຸບຊັບສິນບັດ);

(2). ຂໍ້ມູນກ່ຽວກັບລາຍຮັບ ແລະ ລາຍຈ່າຍ (ໃບລາຍງານຜົນໄດ້ຮັບ);

(3). ຂໍ້ມູນກ່ຽວກັບເງິນກູ້ ແຍກເປັນແຕ່ລະປະເພດ (ໃບລາຍງານຖານະເງິນກູ້ );

(4). ຂໍ້ມູນໜີ້ກ່ຽວກັບເງິນກູ້ທີ່ບໍ່ເກີດດອກອອກຜົນ ແລະ ການສ້າງຄັງແຮເພື່ອໜີ້ທວງຍາກ (ໃບລາຍງານການຈັດຊັ້ນໜີ້).

3. ບົດລາຍງານອື່ນໆຕາມການກໍານົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 19. ການເກັບຮັກສາເອກະສານບັນຊີ**

ທຸກເອກະສານບັນຊີຂອງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ຕ້ອງຖືກເກັບຮັກສາໄວ້ຢ່າງປອດໄພຢູ່ສໍານັກງານເປັນໄລຍະເວລາສິບ (10) ປີ.

## ໝວດທີ V

## ບົດບັນຍັດສຸດທ້າຍ

**ມາດຕາ 20. ເງື່ອນໄຂໃນການຫັນເປັນສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ**

ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ ທີ່ມີຈຸດປະສົງຢາກຫັນເປັນສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຫລື ສະຫະກອນຕ້ອງມີເງື່ອນໄຂດັ່ງລຸ່ມນີ້:

1. ຕ້ອງການຮັບເງິນຝາກແບບສະໝັກໃຈ ທີ່ມີຍອດເງິນຝາກຫຼາຍກວ່າສອງຮ້ອຍ (200) ລ້ານກີບ ຫລື ຕາມກໍານົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ, ຫລື

2. ມີລາຍຮັບປະຈຳປີຫລາຍກວ່າ ໜຶ່ງ (1) ຕື້ກີບຂຶ້ນໄປ. ຕ້ອງໄດ້ຫັນເປັນສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຫລື ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ຕ້ອງໄດ້ຂໍໃບອະນຸຍາດສ້າງຕັ້ງປະຕິບັດຕາມເງື່ອນໄຂທີ່ກ່ຽວຂ້ອງອື່ນໆ ຕາມຂໍ້ກຳນົດວ່າດ້ວຍສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຫລື ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

## ມາດຕາ 21. ການຈັດຕັ້ງປະຕິບັດ

1. ບັນດາອົງການຈັດຕັ້ງຂອງລັດເປັນຕົ້ນອົງການຈັດຕັ້ງມະຫາຊົນ, ຂັ້ນແຂວງ, ເມືອງ, ບ້ານ, ຮ່ວມໝູ່ຂອງປະຊາຊົນ, ບຸກຄົນ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ຫລື ວິສາຫະກິດພາກສ່ວນອື່ນໆ ທີ່ໄດ້ມີການສ້າງຕັ້ງ ຫລື ດຳເນີນງານຜ່ານມາແລ້ວ, ເຄື່ອນໄຫວໃນປະຈຸບັນ ແລະ/ຫລື ພວມຈະມີການສ້າງຕັ້ງເຄື່ອນໄຫວໃນຮູບແບບດຽວກັນນີ້ ຫລື ຄ້າຍຄືກັນກັບກິດຈະກຳການເງິນຈຸລະພາກ ຕ້ອງໄດ້ສະເໜີຂໍໃບຢັ້ງຢືນການຂຶ້ນທະບຽນນຳ ທະນາຄານແຫ່ງ ສປປ ລາວ ຕາມເງື່ອນໄຂ ແລະ ແບບຟອມທີ່ໄດ້ລະບຸໄວ້ໃນຂໍ້ກຳນົດ ສະບັບນີ້ ພາຍໃນກຳນົດເວລາສິບສອງ (12) ເດືອນ, ນັບແຕ່ຂໍ້ກຳນົດສະບັບນີ້ແຈ້ງການອອກນຳໃຊ້ເປັນຕົ້ນໄປ.

2. ທະນາຄານແຫ່ງ ສປປ ລາວ ສາມາດດຳເນີນມາດຕະການປັບໄໝຕໍ່ການລະເມີດ ຂອງຜູ້ດຳເນີນກິດຈະກຳທີ່ມີລັກສະນະການເງິນຈຸລະພາກ, ສະຖາບັນການເງິນໃດໜຶ່ງ ລວມທັງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ລວມທັງຄະນະຜູ້ບໍລິຫານ ຫລື ພະນັກງານ ທັງເປັນບຸກຄົນ ຫລື ເປັນໝູ່ຄະນະ ເປັນຈຳນວນເງິນໜຶ່ງແສນ (100.000) ກີບ ຕໍ່ວັນ ຖ້າຫາກບໍ່ປະຕິບັດຕາມ ຂໍ້ກຳນົດສະບັບນີ້ວາງອອກ ຈົນກວ່າຈະໄດ້ຮັບການແກ້ໄຂຢ່າງຖືກຕ້ອງ.

## ມາດຕາ 22. ຜົນສັກສິດ

ຂໍ້ກຳນົດສະບັບນີ້ໃຊ້ປ່ຽນແທນ ຂໍ້ກຳນົດກ່ຽວກັບການຄຸ້ມຄອງ ການສ້າງຕັ້ງ ແລະ ດຳເນີນທຸລະກິດ ສະຖາບັນການເງິນຈຸລະພາກ ສະບັບເລກທີ 10/ທຫລ ລົງວັນທີ 22 ມິຖຸນາ 2005 ແລະ ມີຜົນສັກສິດນຳໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ,**